# ຝຶກອົບຮົມແບບໃກ້ຊິດ ຫົວຂໍ້: ຄວາມຮູ້ກ່ຽວກັບສັນຍາກະສິກຳ ແລະ ການແກ້ໄຂຂໍ້ຂັດແຍ່ງ ເຫຼັ້ມ II




## ທ່ານຈະຮຽນຮູ້ຫຍັງແດ່?

- ໄດ້ຄວາມຮູ້ ແລະ ຄວາມເຂົ້າໃຈ ກ່ຽວກັບສັນຍາກະສິກຳ ແລະ ການວິເຄາະຈຸດດີ - ຈຸດອ່ອນຂອງສັນຍາກະສິກຳ ທີ່ສືບເນື່ອງມາຈາກລະດັບພື້ນຖານ;
- ພັດທະນາທັກສະຂອງທ່ານ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງ ໂດຍການຝຶກທັກສະໃນການເຈລະຈາຕໍ່ລອງ, ການໄກ່ເກ່ຍ ແລະ ທັກສະອື່ນໆ ທີ່ສະໜັບສະໜູນການແກ້ໄຂຂໍ້ຂັດແຍ່ງ;
- ຮຽນຮູ້ ແລະ ເຂົ້າໃຈກ່ຽວກັບຊ່ອງທາງໃນການເຂົ້າເຖິງການຊ່ວຍເຫຼືອດ້ານກົດໝາຍ;
- ຮຽນຮູ້ ແລະ ເຂົ້າໃຈ ບັນຫາຕົ້ນຕໍກ່ຽວກັບສິດໃນການນຳໃຊ້ ແລະ ຄຸ້ມຄອງທີ່ດິນໃນປັດຈຸບັນ.

## ວາລະຝຶກອົບຮົມມີຫຍັງແດ່?

ຝຶກອົບຮົມແບບໃກ້ຊິດ ໃຊ້ເວລາ 5 ວັນ:

- 3 ວັນ ຝຶກກ່ຽວກັບ ການເປັນຄູຝຶກ ແລະ ທິດສະດີດ້ານກົດໝາຍ;
- 1 ວັນ ສຳລັບຜູ້ເຂົ້າຮ່ວມກະກຽມ, ຝຶກຊ້ອມ ແລະ ນຳພາສະເໜີບົດໃນຫົວຂໍ້ຕ່າງໆ ແລະ ວາງແຜນລົງບ້ານ (ຄູຝຶກແມ່ນຊ່ວຍໃຫ້ຄຳແນະນຳ ໃນການຝຶກຊ້ອມ ແລະ ການວາງແຜນ);
- 1 ວັນ ສຳລັບ ຝຶກທົດລອງຢູ່ຂັ້ນບ້ານ ແລະ ປະເມີນຜົນຮ່ວມກັນ.

## ວິທີການດຳເນີນງານມີແນວໃດແດ່?

- ເຕັກນິກວິທີການຮຽນຮູ້ແບບມີສ່ວນຮ່ວມ ແລະ ມີປະຕິກິລິຍາໂຕ້ຕອບ;
- ຝຶກອົບຮົມ ແມ່ນດຳເນີນໂດຍຄູຝຶກຫຼັກທີ່ໄດ້ຮັບການອົບຮົມ ແລະ ມີປະສົບການເຮັດວຽກນຳຊຸມຊົນ;
- ເຄື່ອງມືປະກອບດ້ວຍແຜນບົດສອນ ແລະ ອຸປະກອນ.

## ເນື້ອໃນຂອງຫຼັກສູດມີຫຍັງແດ່?

- ຮຽນຮູ້ກ່ຽວກັບກົດໝາຍ ແລະ ການເຮັດສັນຍາ;
- ສະພາບລວມຂອງບັນຫາກ່ຽວກັບການເຮັດສັນຍາ;
- ຂໍ້ມູນທີ່ຈຳເປັນ ສຳລັບການເຈລະຈາ, ຮູບແບບຕ່າງໆຂອງການເຈລະຈາທີ່ເປັນປະໂຫຍດສຳລັບການແກ້ໄຂຂໍ້ຂັດແຍ່ງເລື່ອງສັນຍາກະສິກຳ;
- ມາດຕາກົດໝາຍຕ່າງໆ ທີ່ກ່ຽວຂ້ອງກັບການແກ້ໄຂຂໍ້ຂັດແຍ່ງ ແລະ ການເຂົ້າເຖິງຂະບວນການຍຸຕິທຳ ແລະ ບາງວິທີການແກ້ໄຂຂໍ້ຂັດແຍ່ງຂອງຕ່າງປະເທດ ທີ່ສາມາດປັບໃຊ້ໄດ້ກັບປະເທດລາວ;
- ຍຸດທະສາດ ແລະ ວິທີການເຈລະຈາທີ່ລຽບງ່າຍ, ໃຊ້ໄດ້ ແລະ ການປ່ຽນແປງການເຈລະຈາຕໍ່ລອງ.

## ສະເໜີຂໍຮັບການຝຶກອົບຮົມແບບໃກ້ຊິດໄດ້ແນວໃດ?

*ກ່ອນຝຶກອົບຮົມແບບໃກ້ຊິດ:*

- **4 ອາທິດລ່ວງໜ້າ:** ທ່ານຕ້ອງສົ່ງໜັງສືສະເໜີ ເພື່ອເຊີນໃຫ້ໂຄງການໄລຟ໌ ໄປຈັດຝຶກອົບຮົມແບບໃກ້ຊິດ ໃຫ້ແກ່ອົງກອນຂອງທ່ານ ແລະ ຄູ່ຮ່ວມງານທ້ອງຖິ່ນ;
- **3 ອາທິດລ່ວງໜ້າ**: ສົ່ງແຜນບົດຮຽນ ໃຫ້ແກ່ຄູ່ຮ່ວມງານພາກລັດ ແລະ ແບ່ງປັນຄຳຄິດເຫັນທີ່ມີ ຈາກອົງກອນຂອງທ່ານ ຫຼື ຈາກຄູ່ຮ່ວມງານທ້ອງຖິ່ນ ໃຫ້ແກ່ໂຄງການໄລຟ໌;
- **2 ອາທິດລ່ວງໜ້າ**: ສົ່ງລາຍຊື່ບ້ານເພື່ອເຮັດຝຶກອົບຮົມທົດລອງ, ສະຖານທີ່, ໄລຍະທາງ, ລວມທັງເຜົ່າ ແລະ ກຳນົດລະອຽດວ່າ ຈຳເປັນຕ້ອງມີລ່າມແປພາສາ ຫຼື ບໍ່;
- **1 ອາທິດລ່ວງໜ້າ**: ແຈ້ງໃຫ້ໂຄງການໄລຟ໌ຮູ້ ກ່ຽວກັບຈຳນວນຂອງບ້ານ ທີ່ອົງກອນຂອງທ່ານ ວາງແຜນຈະຈັດຝຶກອົບຮົມ ພາຍຫຼັງຝຶກອົບຮົມຈາກໂຄງການໄລຟ໌.

*ພາຍຫຼັງຝຶກອົບຮົມແບບໃກ້ຊິດ:*

- ແຈ້ງໃຫ້ໂຄງການໄລຟ໌ຮັບຮູ້ ກ່ຽວກັບການຝຶກອົບຮົມຂັ້ນຊຸມຊົນຂອງໜ່ວຍງານທ່ານ: ຊື່ບ້ານ, ເມືອງ, ຈຳນວນຂອງຜູ້ເຂົ້າຮ່ວມທັງໝົດ, ຈຳນວນຜູ້ເຂົ້າຮ່ວມທີ່ເປັນເພດຍິງ-ຊາຍ ແລະ ຊົນເຜົ່າ.

ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ LIVVG
VILLAGE FOCUS INTERNATIONAL
ສະຫະພາບເອີຣົບ European Union

ອົງການບ້ານຈຸດສຸມສາກົນ, ບ້ານ ໂພນສະຫວັນໃຕ້, ຮ່ອມ 14, ເຮືອນເລກທີ 207, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ
ຕູ້ໄປສະນີ 4697
ໂທ: +856 021 312 519, ແຟກ +856 021 315 841
Email: lifeproject@villagefocus.org